# ມິຊຊາອາທິດທີ 6 ກຳນົດປາສກາ
## ວັນທີ 14 ພຶດສະພາ 2023



**ພຣະວໍລະສານໂດຍນັກບຸນຢວງ 14, 15-21**

ໃນເວລານັ້ນ, ພຣະເຢຊູເຈົ້າກ່າວແກ່ພວກສາວົກວ່າ: "ຖ້າພວກເຈົ້າຮັກເຮົາກໍໃຫ້ຖືຕາມບັນຍັດຂອງເຮົາ. ສ່ວນເຮົາ, ເຮົາຈະວອນຂໍພຣະບິດາແລ້ວພຣະອົງຈະປະທານພຣະຜູ້ບັນເທົາອີກອົງໜຶ່ງຊຶ່ງຈະຢູ່ກັບພວກເຈົ້າສະເໝີໄປຄືພຣະຈິດແຫ່ງຄວາມຈິງຊຶ່ງໂລກບໍ່ອາດຮັບໄດ້. ຍ້ອນວ່າໂລກບໍ່ເຫັນແລະບໍ່ຮູ້ຈັກພຣະອົງ. ຍ້ອນພຣະອົງສະຖິດຢູ່ກາງພວກເຈົ້າແລະຈະຢູ່ໃນພວກເຈົ້າດ້ວຍ.

ເຮົາບໍ່ປະພວກເຈົ້າໄວ້ໃຫ້ເປັນກຳພ້າ ເຮົາຈະກັບມາຫາພວກເຈົ້າອີກ. ອີກບໍ່ເທິງໂລກຈະບໍ່ເຫັນເຮົາແລ້ວ. ສ່ວນພວກເຈົ້າຈະເຫັນເຮົາ ຍ້ອນເຮົາຊົງຊີວິດແລະພວກເຈົ້າກໍຈະເປັນຜູ້ມີຊີວິດດ້ວຍ. ໃນເວລານັ້ນພວກເຈົ້າຈະຮູ້ວ່າ: "ເຮົາສະຖິດຢູ່ໃນພຣະບິດາ ພວກເຈົ້າຢູ່ໃນເຮົາແລະເຮົາກໍສະຖິດຢູ່ໃນພວກເຈົ້າ. ຜູ້ໃດຮັບເອົາພຣະບັນຍັດຂອງເຮົາແລະຖືຕາມ ຜູ້ນັ້ນແລຮັກເຮົາແທ້. ຜູ້ໃດຮັກເຮົາ ພຣະບິດາຂອງເຮົາກໍຮັກເຂົາ ເຮົາເອງກໍຈະຮັກເຂົາແລະຈະສຳແດງຕົວເຮົາແກ່ເຂົາດ້ວຍ.

ນີ້ແມ່ນວາຈາຂອງພຣະຄຣິສໂຕເຈົ້າ

**ບົດແບ່ງປັນ**

ວັນນີ້ພວກເຮົາຢູ່ໃນອາທິດທີຫົກກຳນົດປາສກາ. ພວກເຮົາກຳລັງກ້າວໄປສູ່ວັນສະຫລອງຫ້າສິບວັນຫລັງຈາກປາສກາ ອັນແມ່ນວັນສະຫລອງພຣະຈິດເຈົ້າສະເດັດລົງມາ.

ວາຈາພຣະເຈົ້າທີ່ພວກເຮົາໄດ້ຟັງວັນນີ້ຢູ່ໃນບໍລິບົດຂອງອາຫານຄ່ຳຄັ້ງສຸດທ້າຍລະຫວ່າງພຣະເຢຊູເຈົ້າກັບພວກລູກສິດ. ຫລັງຈາກໄດ້ລ້າງເທົ້າໃຫ້ພວກລູກສິດພຣະເຢຊູເຈົ້າກໍກ່າວຄຳອຳລາຢ່າງຍືດຍາວກັບພວກເຂົາ. ພຣະອົງບອກສອນພວກເຂົາເຖິງຄວາມສຳພັນລະຫວ່າງພຣະອົງກັບພຣະບິດາ ແລະລະຫວ່າງພຣະອົງກັບພວກລູກສິດ. ພຣະເຢຊູເຈົ້າຮູ້ວ່າເວລາແຫ່ງການທໍລະມານແລະຕາຍຂອງພຣະອົງໃກ້ເຂົ້າມາແລ້ວ, ແຕ່ພຣະອົງກໍບໍ່ຢາກຈາກພວກລູກສິດໄປ. ພຣະອົງບໍ່ຢາກປະພວກເຂົາໃຫ້ເປັນກຳພ້າ. ພຣະອົງຈຶ່ງສັນຍາກັບພວກເຂົາວ່າຈະກັບມາຢູ່ນຳພວກເຂົາອີກ. ແນ່ນອນ, ການປະທັບຢູ່ຂອງພຣະເຢຊູເຈົ້າກັບພວກລູກສິດຫລັງຈາກກັບເປັນຄືນມາບໍ່ຄືກັນກັບການປະທັບຢູ່ຂອງພຣະອົງກັບພວກລູກສິດກ່ອນປາສກາ. ເພາະພຣະເຢຊູເຈົ້າກ່າວວ່າ: ພຣະອົງຈະວອນຂໍພຣະບິດາສົ່ງພຣະຜູ້ບັນເທົາອີກອົງໜຶ່ງມາຢູ່ກັບພວກລູກສິດຄືພຣະຈິດແຫ່ງຄວາມຈິງ. ອົງພຣະຈິດນີ້ຈະຢູ່ທ່າມກາງພວກລູກສິດແລະຢູ່ໃນຕົວພວກເຂົາ ເພື່ອທຳໃຫ້ພວກເຂົາຈື່ຈຳສິ່ງທີ່ພຣະເຢຊູເຈົ້າໄດ້ບອກສອນ.

ທຸກວັນນີ້ພຣະຈິດອົງຜູ້ບັນເທົາ, ອົງແຫ່ງຄວາມຈິງກໍສືບຕໍ່ຢູ່ທ່າມກາງພວກເຮົາ, ຢູ່ໃນຕົວພວກເຮົາເພື່ອຊ່ວຍພວກເຮົາເຂົ້າໃຈເຖິງວາຈາທີ່ພຣະອົງໄດ້ບອກສອນພວກເຮົາແຕ່ລະວັນ. ເພື່ອໃຫ້ຄວາມເຊື່ອຂອງພວກເຮົາເຕີບໃຫຍ່ຂຶ້ນແລະຈື່ຈຳພຣະອົງໄດ້. ແຕ່ພວກເຮົາໄດ້ເປີດໃຈໃຫ້ພຣະອົງເຂົ້າມາປະທັບຢູ່ບໍ? ພວກເຮົາໄດ້ຍອມຟັງສຽງຂອງພຣະຈິດອົງແຫ່ງຄວາມຈິງທີ່ບອກສອນໃນຈິດໃຈພວກເຮົາບໍ? ພວກເຮົາໄດ້ຮ່ວມງານກັບພຣະຈິດເຈົ້າດ້ວຍການອ່ານແລະລຳເພິງວາຈາພຣະເຈົ້າບໍ? ພວກເຮົາໄດ້ສວດຫາພຣະຈິດອົງຜູ້ບັນເທົາແຕ່ລະວັນບໍ?

**ພາວະນາ**

ໂອພຣະເຢຊູເຈົ້າ ໂຜດສົ່ງພຣະຈິດຂອງພຣະອົງລົງມາເໜືອລູກ, ເພື່ອອົງພຣະຈິດເຈົ້າຈະໄດ້ຊ່ວຍລູກໃຫ້ເຂົ້າໃຈຄຳສອນຂອງພຣະອົງແລະເພື່ອລູກຈະໄດ້ນຳມາປະຕິບັດໃນຊີວິດຂອງລູກແຕ່ລະວັນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ